ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ 0788 /ກງ

ຂໍ້ຕົກລົງຂອງລັດຖະມົນຕີ

ວຽງຈັນ, ວັນທີ 08 MAY 2003

ວ່າດ້ວຍການກຳນົດລາຄາຂາຍຍົກໃບຫວຍພັດທະນາທຸກປະເພດ.

– ອີງຕາມມະຕິຕົກລົງຂອງສະພາລັດຖະມົນຕີສະບັບເລກທີ 347/ປສລ, ລົງວັນທີ 14/12/82 ກ່ຽວກັບການພິມຈຳໜ່າຍໃບຫວຍພັດທະນາ.

– ອີງຕາມດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 127/ນຍ, ລົງວັນທີ 03/10/2000 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.

– ອີງຕາມຄຳສັ່ງແນະນຳສະບັບເລກທີ 1842/ກງ, ລົງວັນທີ 28/11/2000 ເລື່ອງໃຫ້ຫັນເອົາການທຸລະກິດຫວຍພັດທະນາມາຂຶ້ນກັບການຄຸ້ມຄອງໂດຍກົງຂອງລັດ, ຂັ້ນແຂວງ ແລະ ເມືອງ.

– ອີງຕາມບົດຍັດຕິຂອງກອງປະຊຸມຫວຍພັດທະນາຄັ້ງທີ I ທົ່ວປະເທດລົງວັນທີ 24– 25/12/2002.

– ອີງຕາມກອງປະຊຸມສະພາບໍລິຫານ ລັດວິສາຫະກິດ ຫວຍພັດທະນາ ຄັ້ງທີ XI ລົງວັນທີ 02/5/2003.

– ອີງຕາມການສະເໜີຂອງລັດວິສາຫະກິດ ຫວຍພັດທະນາສະບັບເລກທີ 173/ຫພນ, ລົງວັນທີ 29/4/2003.

## ລັດຖະມົນຕີວ່າການກະຊວງການເງິນຕົກລົງ :

ມາດຕາ 1 : ເຫັນດີໃຫ້ລັດວິສາຫະກິດ ຫວຍພັດທະນາຂາຍຍົກໃບຫວຍພັດທະນາທຸກປະເພດໃຫ້ສາຂາຈຳໜ່າຍໃນລະດັບມູນຄ່າຮັບໄປຈຳໜ່າຍຕໍ່ງວດຕາມອັດຕາຮັບເໝົາດັ່ງນີ້:

1.1 ແຂວງທີ່ມີເສດຖະກິດພວມຂະຫຍາຍຕົວ : ເຂດພິເສດໄຊສົມບູນ, ແຂວງຜົ້ງສາລີ, ແຂວງ ຫົວພັນ, ແຂວງ ຫລວງນ້ຳທາ, ແຂວງ ອຸດົມໄຊ, ແຂວງ ຊຽງຂວາງ, ແຂວງ ບໍ່ແກ້ວ, ແຂວງ ໄຊຍະບູລີ, ແຂວງ ບໍລິຄຳໄຊ, ແຂວງ ເຊກອງ ແລະແຂວງ ອັດຕະປື.

| ຂັ້ນ | ລະດັບມູນຄ່າຮັບໄປຈຳໜ່າຍຕໍ່ງວດ | ອັດຕາຮັບເໝົາ |
|---|---|---|
| 1 | ແຕ່ 01 ຫາ 500.000.000 ກີບ | 3,0% |
| 2 | ແຕ່ 500.000.001 ຫາ 1.000.000.000 ກີບ | 2,8% |
| 3 | ແຕ່ 1.000.000.001 ກີບຂຶ້ນໄປ | 2,6% |

1.2 ແຂວງທີ່ມີເສດຖະກິດຂະຫຍາຍຕົວດີ : ກຳແພງນະຄອນ, ແຂວງສະຫວັນນະເຂດ, ແຂວງ ຈຳປາສັກ, ແຂວງ ສາລະວັນ, ແຂວງ ຫລວງພະບາງ, ແຂວງ ວຽງຈັນ ແລະແຂວງ ຄຳມ່ວນ.

| ຂັ້ນ | ລະດັບມູນຄ່າຮັບໄປຈຳໜ່າຍຕໍ່ງວດ | ອັດຕາຮັບເໝົາ |
|---|---|---|
| 1 | ແຕ່ 01 ຫາ 500.000.000 ກີບ | 3,2% |
| 2 | ແຕ່ 500.000.001 ຫາ 1.000.000.000 ກີບ | 3,0% |
| 3 | ແຕ່ 1.000.000.001 ກີບຂຶ້ນໄປ | 2,8% |

ມາດຕາ 2: ໃຫ້ລັດວິສາຫະກິດ ຫວຍພັດທະນາເຮັດສັນຍາ ໂດຍກົງກັບສາຂາຈຳໜ່າຍ, ພະແນກການເງິນປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຊື້ນຳ ແລະພ້ອມກັນຈັດຕັ້ງປະຕິບັດໃຫ້ເຂັ້ມງວດ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ປ່ຽນແທນ ຂໍ້ຕົກລົງສະບັບ ເລກທີ 1801/ກງ, ລົງວັນທີ 05/11/2001 ສຳລັບ ເລກທ້າຍ ແລະ ເລກສະຫຼາກພັດທະນາ 2ໂຕ– 3ໂຕ ,ຂໍ້ຕົກລົງສະບັບເລກທີ 2280/ກງ. ຫກ, ລົງວັນທີ 01/10/2002 ສຳລັບ ໃບຫວຍເລກ 04 ໂຕ ແບບຈົກຂາຍ, ຂໍ້ຕົກລົງສະບັບເລກທີ 2206/ກງ.ຫກ, ລົງວັນທີ 18/09/2002 ສຳລັບ ເລກ 2ໂຕ– 3ໂຕ ແບບຈົດຂາຍ ແລະ ມີຜົນສັກສິດນຳໃຊ້ເປັນເອກະພາບໃນທົ່ວປະເທດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ,

ກະຊວງການເງິນ

ລັດຖະມົນຕີ

ຈັນສີ ໂພສີຄຳ